**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ສະມາຄົມ ຜູ້ຂົນສົ່ງ ແລະ ຈັດສົ່ງ ສິນຄ້າ
ລະຫວ່າງ ປະເທດ ຂອງ ສປປ ລາວ

024-
ເລກທີ ............/ ສຂຈລ
ນະຄອນຫຼວງວຽງຈັນ, ວັນທີ 25 NOV 2024

## <u>ແຈ້ງການ</u>

**ເຖິງ:** ບັນດາສະມາຊິກ ບໍລິສັດ ຜູ້ປະກອບການ ຂົນສົ່ງສິນຄ້າ, ຕົວແທນບໍລິການແຈ້ງພາສີ ແລະ ບັນດາຫົວໜ່ວຍທຸລະກິດທົ່ວໄປ ທີ່ນຳໃຊ້ລະບົບ CBTM

**ເລື່ອງ:** ການເປີດນຳໃຊ້ເວີຊັນອັບເດດຂອງລະບົບ CBTM V.2

- ອີງຕາມ ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການປະກາດ ແລະ ນຳໃຊ້ ກົດລະບຽບ ຂອງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດ ຂອງ ສປປ ລາວ ເລກທີ 4908/ຍທຂ ລົງວັນທີ 2 ມີນາ 2020.
- ອີງຕາມ ການພັດທະນາ ແລະ ປັບປຸງລະບົບຢ່າງຕໍ່ເນື່ອງຂອງການອອກແບບ ແລະ ນຳໃຊ້ລະບົບ CBTM ໃຫ້ສາມາດເຊື່ອມໂຍງກັບ APLICATION ຕົວອື່ນໆ

ສະມາຄົມ ຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງ ປະເທດ ຂອງ ສປປ ລາວ ຂໍຖືເປັນກຽດຮຽນແຈ້ງມາຍັງ ບັນດາສະມາຊິກ ບໍລິສັດ ຜູ້ປະກອບການ ຂົນສົ່ງສິນຄ້າ, ຕົວແທນບໍລິການແຈ້ງພາສີ ແລະ ບັນດາຫົວໜ່ວຍທຸລະກິດທົ່ວໄປ ທີ່ນຳໃຊ້ລະບົບ CBTM ເຊິ່ງໃນປັດຈຸບັນທາງສະມາຄົມ LITFA ໄດ້ມີການພັດທະນາ ແລະ ປັບປຸງລະບົບຢ່າງຕໍ່ເນື່ອງຂອງການອອກແບບ ແລະ ນຳໃຊ້ລະບົບ CBTM ໃຫ້ສາມາດເຊື່ອມໂຍງກັບ APLICATION ຕົວອື່ນໆ ແລະ ຈະໄດ້ເປີດນຳໃຊ້ເວີຊັນອັບເດດຂອງລະບົບ CBTM V.2 (CBTM VERSION 2) ເຊິ່ງຈະໄດ້ເລີ່ມຈັດຕັ້ງປະຕິບັດຕັ້ງແຕ່ ວັນທີ 01 ທັນວາ 2024 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງ ມາຍັງທ່ານ ທຸກພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ປະຕິບັດຕາມແຈ້ງການນີ້.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

**ປະທານສະມາຄົມ**

ສະມາຄົມ ຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດ ຂອງ ສປປ ລາວ (ສຂຈລ) Lao International Truckers and Freight Forwarders Association (LITFA)

ສາຄອນ ພິລາງາມ